ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 0014 /ປທລ/2022

ນະຄອນຫຼວງວຽງຈັນ, ວັນທີ: 15 ມີນາ 2022

**ຮຽນ:** ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ບັນດາ ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

**ເລື່ອງ:** ການແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານຄັ້ງທີ 1/2022

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄ້ອງຫຼັກຊັບ ວ່າດ້ວຍລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບ ກ່ຽວກັບມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານຄັ້ງທີ 1/2022 ໃນວັນທີ 15 ມີນາ 2022 ດັ່ງລາຍລະອຽດລຸ່ມນີ້:

1. ຮັບຮອງເອົາບົດບັນທຶກກອງປະຊຸມສະພາບໍລິຫານ ປທລ ຄັ້ງທີ 3/2021 ເມື່ອວັນທີ 12 ພະຈິກ 2021;
2. ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2021 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບ ຂອງຜູ້ກວດສອບພາຍນອກ ປະຈຳປີ 2021 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ;
3. ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2022 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ພິຈາລະນາ ແລະ ຮັບຮອງ;
4. ຮັບຮອງບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2021 ອັນເນື່ອງມາຈາກບໍລິສັດ ຂາດທຶນໃນການດຳເນີນ ທຸລະກິດ ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ພິຈາລະນາ ແລະ ຮັບຮອງ;
5. ກຳນົດເອົາວັນທີ 31 ມີນາ 2022 ເປັນມື້ປິດປຶ້ມບັນຊີຜູ້ຖືຄອງຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2021;
6. ຮັບຮອງແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Price Waterhouse Coopers (Lao) Sole Co., Ltd. ("PWC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2022 ຢູ່ລະຫວ່າງ 34,000 – 37,000 ໂດລາສະຫະລັດ; ໃຫ້ນຳສະເໜີໃນກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2021 ພິຈາລະນາ ແລະ ຮັບຮອງ;
7. ພິຈາລະນາ ແລະ ຮັບຮອງເອົາການລາອອກຈາກສະມາຊິກສະພາບໍລິຫານ ປທລ ຊຸດປະຈຸບັນອັນເນື່ອງມາຈາກໝົດວາລະ ໃຫ້ນຳ ສະເໜີໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ພິຈາລະນາ ແລະ ຮັບຮອງ ໂດຍມີລາຍຊື່ຕໍ່ໄປນີ້:

1. ທ່ານ ນາງ ສະຫວັນທອງ ພິງສະຫວັນ, ຮອງປະທານສະພາບໍລິຫານ
2. ທ່ານ ນາງ ຈັນທະດອນ ເມກສະຫວັນ, ຮອງປະທານສະພາບໍລິຫານ
3. ທ່ານ ໄພໄຊ ຈັນທະວົງສາ, ສະມາຊິກສະພາບໍລິຫານ ອິດສະຫຼະ
4. ທ່ານ ໜູພັນ ມະຫາພົນ, ສະມາຊິກສະພາບໍລິຫານ ອິດສະຫຼະ
5. ທ່ານ ນາງ ດາລີ ພົນເສນາ, ສະມາຊິກສະພາບໍລິຫານ ອິດສະຫຼະ
6. ທ່ານ ບຸນຖົມ ຈິດຕະວົງ, ສະມາຊິກສະພາບໍລິຫານ

8. ພິຈາລະນາ ແລະ ຮັບຮອງເອົາສະມາຊິກສະພາບໍລິຫານ ປທລ ຊຸດໃໝ່ປະຈຳສົກປີ 2022-2024 ໃຫ້ນຳສະເໜີໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ພິຈາລະນາ ແລະ ຮັບຮອງ ໂດຍມີລາຍຊື່ ແລະ ຕຳແໜ່ງຕໍ່ໄປນີ້:

    1. ທ່ານ ຫວ່າງ ຣັຕະນະວົງສ໌, ປະທານສະພາບໍລິຫານ ອິດສະຫຼະ (ສືບຕໍ່ດຳເນີນຕຳແໜ່ງມາແຕ່ປີ 2021)
    2. ທ່ານ ຄຳສອນ ສິດທິໄຊ, ຮອງປະທານສະພາບໍລິຫານ
    3. ທ່ານ ມາກ ລຸວັນ, ສະມາຊິກສະພາບໍລິຫານ
    4. ທ່ານ ນາງ ແສງເດືອນ ກ້ຽວສຸວັດ, ສະມາຊິກສະພາບໍລິຫານ
    5. ທ່ານ ວຽງຄອນ ສິດທິໄຊ, ປະທານຄະນະກຳມະການເສດຖະກິດ, ສະມາຊິກສະພາບໍລິຫານ ອິດສະຫຼະ
    6. ທ່ານ ບຸນຖົມ ວົງສຸລີ, ປະທານຄະນະກຳມະການກວດສອບພາຍໃນ, ສະມາຊິກສະພາບໍລິຫານ ອິດສະຫຼະ;
    7. ທ່ານ ດາວອນ ຫວ່າງວິຈິດ, ປະທານຄະນະກຳມະການກວດກາຄວາມສ່ຽງ, ສະມາຊິກສະພາບໍລິຫານ ອິດສະລະ;

9. ກຳນົດວັນທີເປີດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ໃນວັນທີ 28 ເມສາ 2022 ເວລາ 8:30 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ;

10. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ມີລາຍລະອຽດດັ່ງນີ້:

    ***ວາລະທີ 1:*** *ພິຈາລະນາ ແລະ ຮັບຮອງເອົາ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020, ເມື່ອວັນທີ 7 ພຶດສະພາ 2021;*

    ***ວາລະທີ 2:*** *ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2021 ແລະ ເອກະສານລາຍງານການເງິນ ທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2021 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ພິຈາລະນາ ແລະ ຮັບຮອງ;*

    ***ວາລະທີ 3:*** *ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2022 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ພິຈາລະນາ ແລະ ຮັບຮອງ;*

    ***ວາລະທີ 4:*** *ພິຈາລະນາ ແລະ ຮັບຮອງບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2021 ອັນເນື່ອງມາຈາກບໍລິສັດ ຂາດທຶນໃນການດຳເນີນທຸລະກິດ ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ພິຈາລະນາ ແລະ ຮັບຮອງ;*

    ***ວາລະທີ 5:*** *ພິຈາລະນາ ແລະ ຮັບຮອງແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Price Waterhouse Coopers (Lao) Sole Co., Ltd. ("PWC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2022 ຢູ່ລະຫວ່າງ 34,000 – 37,000 ໂດລາສະຫະລັດ; ໃຫ້ນຳສະເໜີໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ພິຈາລະນາ ແລະ ຮັບຮອງ;*

**ວາລະທີ 6:** *ພິຈາລະນາ ແລະ ຮັບຮອງເອົາການລາອອກຈາກສະມາຊິກສະພາບໍລິຫານ ປທລ ຊຸດປະຈຸບັນອັນເນື່ອງມາຈາກໝົດວາລະ ໃຫ້ນຳສະເໜີໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ພິຈາລະນາ ແລະ ຮັບຮອງ ໂດຍມີລາຍຊື່ຕໍ່ໄປນີ້:*

1. *ທ່ານ ນາງ ສະຫວັນທອງ ພົງສະຫວັນ, ຮອງປະທານສະພາບໍລິຫານ*
2. *ທ່ານ ນາງ ຈັນທະດອນ ເມກສະຫວັນ, ຮອງປະທານສະພາບໍລິຫານ*
3. *ທ່ານ ໂພໄຊ ຈັນທະວົງສາ, ສະມາຊິກສະພາບໍລິຫານ ອິດສະຫຼະ*
4. *ທ່ານ ໜູພັນ ມະຫາພົນ, ສະມາຊິກສະພາບໍລິຫານ ອິດສະຫຼະ*
5. *ທ່ານ ນາງ ດາລີ ພົນເສນາ, ສະມາຊິກສະພາບໍລິຫານ ອິດສະຫຼະ*
6. *ທ່ານ ບຸນຖັນ ຈິດຕະວົງ, ສະມາຊິກສະພາບໍລິຫານ*

**ວາລະທີ 7:** *ພິຈາລະນາ ແລະ ຮັບຮອງເອົາສະມາຊິກສະພາບໍລິຫານ ປທລ ຊຸດໃໝ່ປະຈຳສົກປີ 2022-2024 ໃຫ້ນຳສະເໜີໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ພິຈາລະນາ ແລະ ຮັບຮອງ ໂດຍມີລາຍຊື່ ແລະ ຕຳແໜ່ງຕໍ່ໄປນີ້:*

1. *ທ່ານ ຫວ່າງ ຣັຕະນະວົງສ໌, ປະທານສະພາບໍລິຫານ ອິດສະຫຼະ (ສືບຕໍ່ດຳເນີນຕຳແໜ່ງມາແຕ່ປີ 2021)*
2. *ທ່ານ ຄຳສອນ ສິດທິໄຊ, ຮອງປະທານສະພາບໍລິຫານ*
3. *ທ່ານ ມາກ ລຸວັນ, ສະມາຊິກສະພາບໍລິຫານ*
4. *ທ່ານ ນາງ ແສງເດືອນ ກ້ຽວສຸວັດ, ສະມາຊິກສະພາບໍລິຫານ*
5. *ທ່ານ ວຽງຄອນ ສິດທິໄຊ, ປະທານຄະນະກຳມະການເສດຖະກິດ, ສະມາຊິກສະພາບໍລິຫານ ອິດສະຫຼະ*
6. *ທ່ານ ບຸນຖັນ ວົງສຸລີ, ປະທານຄະນະກຳມະການກວດສອບພາຍໃນ, ສະມາຊິກສະພາບໍລິຫານ ອິດສະຫຼະ;*
7. *ທ່ານ ດາວອນ ຫວ່າງວິຈິດ, ປະທານຄະນະກຳມະການກວດກາຄວາມສ່ຽງພາຍໃນ, ສະມາຊິກສະພາບໍລິຫານອິດສະລະ;*

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ປິໂຕຣລຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຫ່ວ່າງ ຣັຕຕະນະວົງ
Vang RATANAVONG